# ການປະຈົນໄພຂອງຣັດຊານ

900



ນິທານ ກາຕູນຕ່າງປະເທດ

# ຣັດຊານກັບພໍ່ມົດຮ້ອຍເລ່

ຈັດພິມ ໂດຍສະມາຄົມນັກປະພັນລາວ

ການປະຈົນໄພຂອງຣັດຊານ

---

# ນິທານກາຕູນ ອາຣາບ

# ຣັດຊານກັບພໍ່ມົດຮ້ອຍເລ່

ແປ : ຈ. ເດືອນສະຫວັນ

---

ພິມ ໂດຍສະມາຄົມນັກປະພັນ



1. ກາວກ່ອນກີ້, ນະຄອນ
ແບດແດດຮຸ່ງເຮືອງເຫລືອງ
ເຫລື້ອມ ຊາຍໜຸ່ມຮູບຫລໍ່
ຄົນໜຶ່ງຊື່ຫາວຮັດຊານ.
ເຂົາກຳພ້າພໍ່

2. ແມ່ເອົາອົກເອົາ
ໃຈລູກຊາຍເກີນໄປ
ຫ້າວມັກຫລິ້ນກິນຟຸມ
ເຟືອຍເຮັດໃຫ້ເງິນ
ຄຳບົກແຫ້ງລົງທຸກມື້.



3, ແມ່ໄດ້ທ້ອນໂຮມຄຳທີ່ມີຢູ່ເປີດຮ້ານ ຂາຍຄຳໃຫ້ທ້າວຣັດຊານ. ມື້ໜຶ່ງແຂກ ເປີເຊຍຄົນໜຶ່ງໄດ້ມາເຫັນຮ້ານ ຂອງ ຣັດຊານ.





4. ຄົນແປກໜ້າກ້າວເຂົ້າໄປໃນຮ້ານຂອງຣັດຊານແລະ ກ່າວຍ້ອງຂົມວ່າ: "ໂທພະເຈົ້າອາລາ! ຢູ່ທີ່ນີ້ ມີຊາຍຜູ້ຮູບຫລໍ່ແລະສະຫລາດຫລັກແຫລມ."



5. ພໍແຕ່ເຫັນໜ້າຫລານລຸງກໍ່ຮູ້ໂລດວ່າຫລານເປັນຄົນດີມີສິກສີ ຂ້ອຍບໍ່ມີລູກຊາຍຢາກຮັບເອົາເຈົ້າເປັນລູກບຸນທຳເພື່ອຢາກຖອດວິຊາ ລຶກລັບແລະຫລານຈະຮັ່ງມີເປັນເສດຖີພາຍໜ້າ.



6. ເມື່ອເປັນລູກ
ບຸນທຳຂອງ ລຸງ
ແລ້ວຫລານ ຈະ
ໄດ້ຮັບບຸນນຳ ລະ
ດິກລ້ຳຄາ ເມື່ອ
ໃດລະລຸງ ?



7. ເຖົ້າເປີເຊຍນັດ
ກັບຮັດຊານວ່າ ມື້ອື່ນ
ພົບກັນອີກ. ຮັດຊານດີ
ໃຈຫລາຍຟ້າວ ນຳ
ເມືອເລົ່າໃຫ້ແມ່ຟັງ.
ແມ່ບໍ່ເຊື່ອແລະຫ້າມບໍ່
ໃຫ້ລູກຫລົງກົນພໍ່ມົດ.



8. ຄືນນັ້ນຣັດຊານນອນບໍ່
ຫລັບເຂົາຄິດຫວງຳ, ພໍໄກ່
ຂັ້ນທ້າວກໍລຸກໄປໄຂຮ້ານ
ແຕ່ເຊົ້າແລະຕາເຖົ້າເປີ
ເຊຍລໍຖ້າຢູ່ທີ່ນັ້ນແລ້ວ.





໑. ຮູ້ວ່າຮັກຊານຍັງເປັນ
ໂສດເຖົ້າເປີເຊຍດີ ໃຈ
ຫລາຍ ຈັ່ງແມ່ນຖືກກັບຈຸດ
ປະສົງແທ້ຫນໍບອກໃຫ້ທ້າວ
ຈັບເອົາພານທອງເຫລືອງ
ແລະເປົ່າໄຟ

10.ເຖົ້າເປີເຊຍ
ເສກຄາຖາ



11.ພານທອງເຫລືອງ
ທີ່ຈູບຢູ່ໃນເຕົາໄຟໄດ້
ກັບກາຍເປັນແທ່ງຄຳ



12. ເຖົ້າເປີເຊຍເວົ້າ : ຫລານນຳເອົາຄຳຈຳນວນຫນຶ່ງໄປຂາຍຢູ່ຕະຫລາດສ່ວນເຫລືອນັ້ນເອົາໄວ້, ຕ້ອງຣັກສາຄວາມລັບສຸດຂີດ. ທ້າວເອົາຄຳໄປຂາຍຜູ້ຄົນພາກັນຊື້ເພາະເປັນຄຳເນື້ອດີ.





13.ຣັດຊານດີໃຈຫລາຍ ຟ້າວເມືອແຈ້ງຂ່າວ ໃຫ້ແມ່ຊາບ. ໄດ້ຍິນລູກເລົ່າໃຫ້ຟັງແມ່ກໍ່ອຸກອັ່ງວິຕົກ. ຣັດຊານປອບໃຈແມພ້ອມທັງຂໍເອົາໂອທອງເຫລືອງເພື່ອຊຸບເປັນຄຳ. ຣັດຊານບອກໃຫ້ຣັດຊານຢ່າຟ້າວຮ້ອນຮົນ.





14. ຮັດຊານຟັງ
ຄວາມເຖົ້າເປີເຊຍ,
ຟ້າວມ້ຽນໝັດຫ້ອງ
ຂາຍປິດຮ້ານ.



15. ແລ້ວພາຕາເຖົ້າ
ເປີເຊຍເມືອເຮືອນ
ຂອງຕົນເພື່ອຂຸບຄຳ.



16.ຮັດຊານມີຄວາມຍິນ
ດີທີ່ ໄດ້ຕ້ອນຮັບແຂກຜູ້ພິ
ເສດ



17.ເຖິງວ່າຈະ
ບໍ່ພໍໃຈຕາເຖົ້າ
ເປີເຊຍແຕ່ຮູບ
ນອກແລ້ວຜູ້ເປັນ
ແມ່ຈຳຕ້ອງສະ
ແດງທ່າທີຍິ້ມດີ
ຕໍ່ແຂກ.





18. ເຖົ້າເປີເຊຍເອົາຖົງແປ້ງຍື່ນໃຫ້ຮັດຊານເພື່ອຊຸບຄຳ. ໃນຂະນະທີ່ຮັດຊານພວມຊື່ນຊົມກັບຖົງແປ້ງ. ເຖົ້າເປີເຊຍກໍ່ຫລອນເອົາຢາເບື່ອໃສ່ອາຫານຂອງຮັດຊານ.



19. ພໍແຕ່ຣັດຊານ
ກິນລົງຄໍທັນໃດກໍ່
ໝົດສະຕິເຖົ້າ
ເປີເຊຍ ຟ້າວ
ເອົາສົບຂອງຣັດ
ຊານຍັດເຂົ້າໄປ
ໃນຫີບໄມ້.





20. ເຖົ້າປີເຊຍ
ຈ້າງຄົນຂົນເອົາ
ຫີບຫມ່ວຍນັ້ນອອກ
ສູ່ທະເລ



21. ເມື່ອກະກຽມຄົບ
ຖ້ວນແລ້ວ, ເຖົ້າປີ
ເຊຍກໍ່ເອົາຫີບແລະ
ຄຳທັງໝົດໃສ່ ສະ
ເພົາອອກເດີນທາງ.



22. ເມື່ອລູກຊາຍຫາຍ
ສາບສູນຜູ້ເປັນແມ່ ກໍ່
ຮ້ອງໄຫ້ແລະສ້າງກອງ
ພອນຈຳລອງໄວ້ທຸກ.
ສ່ວນເຖົ້າເປີເຊຍແມ່ນ
ພໍ່ມົດຊຸບຄຳ໘໐໙ຫົມຊວາບາ
ແຮມ.





23 ໄປຕາມໄປ, ເມືອ ໄກຈະເຖິງຈຸດໝາຍ ພໍ່ ມົດບາແຣມແກ້ເຊືອກໃຫ້ ຣັດຊານ ແລະ ແລ້ວກໍພາ ທ້າວໄປສູ່ຝັ່ງທະເລແຫ່ງ ໜຶງ.







24 ເມື່ອຟື້ນຄືນມາ ຣັດຊານຮູ້ວ່າຕົນຖືກຈັບ ບໍ່ຊາງຈະເຮັດແນວໃດ ພ້ອມນັ້ນເຖົ້າປີເຊຍ ກໍ່ສາລະພາບວ່າຕົນ ແມ່ນພໍ່ມົດ ແລະ ຊີ້ ມືໄປທາງທິດພູເຂົາສູງ ບ່ອນທີ່ມີແປ້ງຜົງຊຸບຄຳ.



25 ເມື່ອຈິນຕາແຈ ຣັດ
ຊານຈຳຕ້ອງປະຕິບັດຕາມ
ຄຳສັ່ງຂອງມັນ. ທັນໃດບາ
ແຣມດຶງເອົາຄ້ອງທອງອອກ
ມາເຄາະສອງສາມບາດ, ກໍ່
ປາກົດເຫັນມ້າມະນິກາຍໂຕ
ໜຶ່ງບິນລົງມາຈາກທ້ອງຟ້າ.



26 ມ້າມະນີກາບບິນລົງມາ ຕ້ອນເອົາສອງຄົນບິນຂຶ້ນເມືອເທິງທ້ອງຟ້າ.





27 ເມື່ອມ້າພາຄົນທັງ
ສອງບິນຂຶ້ນເມືອຫາແຖນ
ແລ້ວກໍຫາຍຕົວ. ພໍ່ມົດ
ເວົ້າກັບຣັດຊານວ່າ:
" ນັບແຕ່ນີ້ຕໍ່ໄປຣັດຊານ
ໄດ້ກາຍເປັນຂ້າທາດ
ຂອງພໍ່ມົດ! ".



28 ພໍ່ມົດ ຫົວກາກໆ.
ຣັດຊານຄຽດຂຶ້ນຫລາຍ.



29 .ທັນໃດຣັດຊານ ໄດ້ກະໂດດໄປຫາພໍ່ ມືດຍາດເອົາ ຄ້ອງ ທອງໜ່ວຍນັ້ນ.





30 ທ້າວຮັດຊານ
ໃຊ້ໝົດກຳລັງ ວັ້ງ
ຊາຫີນຢູ່ຊຸກດັນໃຫ້
ຕາເຖົ້າພໍ່ມົດຕົກລົງ
ເຫວເລິກ.



31 ພໍ່ມົດຕົກລົງທະ
ເລຫົວກະແທກໃສ່ພະ
ລານຫີນຕາຍກັບທີ່.
ທັນໃດເຈົ້າຍັກເອເບີ
ລິດເປົ່າເອົາວິນຍານ
ຂອງພໍ່ມົດໄປຫາໜ້
ນ້ຳຝົດຂອງຈ່າຍົມພິ
ບານຢູ່ພົມມາລົກ.



32 ຣັດຊາຍພົ້ນຈາກ
ການເປັນຂ້າທາດຂອງ
ພໍ່ມົດ, ທ້າວເກັບເອົາ
ຄ້ອງທອງ ທັງໆທີ່ບໍ່ຮູ້
ວ່າມີປະໂຫຍດຫຍັງ. ຢູ່
ທາງຕີນພູທ້າວແນມ
ເຫັນແສງໄຟຮຸ່ງພໍມັບ
ມຽງທ້າວມຸ້ງໜ້າໄປ
ຫາທີ່ນັ້ນ.





33. ໄປຮອດນັ້ນຈຶ່ງ
ຮູ້ວ່າແມ່ນຫໍຜາສາດ
ຄຳ ທີ່ຮຸ່ງສະຫວ່າງ
ສະໄຫວ, ຣັດຊານດີ
ໃຈຫລາຍ ພ້ອມທັງ
ອະທິຖານໃຫ້ ພະ
ເຈົ້າອາລາຊ່ວຍຕື່ມ.





34. ແນມໄປຂ້າງ
ໃນຂອງຫໍຜາສາດ
ເຫັນຍິງສາວງາມ
2 ຄົນພວມຫລິ້ນ
ຫມາກລຸກ.





35 ພໍແຕ່ແນມເຫັນຣົດ
ຊານຍິງສາວໜຸ່ມກ່ວ່າ
ກ່າວຂຶ້ນວ່າ "ເອີ້ອຍ!
ຊາຍຄົນນັ້ນຄືງຈະເປັນ
ເຫຍື່ອເຄາະຮ້າຍຂອງ
ຕາເຖົ້າພໍ່ມົດບາແຮມ.
ຣົດຊານຕອບວ່າ
ແມ່ນແລ້ວ
[illegible]...

36 ,ສອງເອື້ອຍນ້ອງມີຄວາມດີໃຈຟ້າວ
ເອົາທ້າວຮັດຊານ ໄປອາບນ້ຳ ປ່ຽນ
ເຄື່ອງນຸ່ງ.







37 ພວກນາງສາວ
ໄດ້ຈັດງານລ້ຽງຕ້ອນ
ຮັບທ້າວຮັດຊານ. ຮັດ
ຊານໄດ້ເລົ່າ ເຫດ
ການທັງໝົດໃຫ້ພວກ
ນາງຟັງ.



38 ອົງຫຍິງຫລ້າ ໄດ້ເລົ່າວ່າ
ບັນດາເຈົ້າຫຍິງເຫລົ່ານັ້ນ
ລ້ວນແຕ່ຖືກພໍ່ມົດສາບ ແລະ
ພວກເຂົາຫາກໍ່ພົ້ນສາບພາຍ
ຫລັງທີ່ພໍ່ມົດ ໄດ້ຕາຍ ໄປ.

ພິມທີ່ໂຮງພິມນະຄອນຫລວງ
ຕາມ ທ ບ: 07/ ພທ ປ 19.11.97
ຈຳນວນ : 2.000 ຫົວ